# ຄະນະມະຫາວິທະຍາໄລຂອນແກ່ນ

# ສົນໃຈໃນພາລະກິດການດຳເນີນງານຂອງທະນາຄານແຫ່ງ ສປປ ລາວ



✸ **ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ຄະນະມະຫາວິທະຍາໄລຂອນແກ່ນແຫ່ງປະເທດໄທ ເຊິ່ງປະກອບດ້ວຍການນຳ, ອາຈານ ແລະ ນິສິດນັກສຶກສາລະດັບປະຣິນຍາຕີພາກປົກກະຕິຈຳນວນ 80 ຄົນ ເຊິ່ງນຳໂດຍທ່ານ ຮອງສາດສະດາຈານ ນາງ ອະນົງນຸດ ທຽນທອງ ໄດ້ເຂົ້າຢ້ຽມຢາມ ແລະ ຮັບຟັງການປາຖະກະຖາພາຍໃຕ້ຫົວຂໍ້ "ປະຫວັດຄວາມເປັນມາຂອງທະນາຄານແຫ່ງ ສປປ ລາວ, ສະພາບເສດຖະກິດຂອງ ສປ ລາວ" ທີ່ຫ້ອງປະຊຸມໃຫຍ່ທະນາຄານແຫ່ງ ສປປ ລາວ ທີ່ນະຄອນຫຼວງວຽງຈັນ ເມື່ອວັນທີ 9 ທັນວາ ຜ່ານມາ.

ຄະນະດັ່ງກ່າວໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ພັນທະບູນ ໄຊຍະເພັດ ຮອງຫົວໜ້າກົມພົວພັນ ສາກົນ ທະນາຄານແຫ່ງ ສປປ ລາວ ເຊິ່ງທ່ານໄດ້ຢືນຢັນວ່າ: ການພົບປະ ແລະ ແລກປ່ຽນຄວາມຄິດເຫັນລະຫວ່າງກັນມັນແມ່ນຂີດໝາຍອັນດີທີ່ທະນາຄານແຫ່ງ ສປປ ລາວ ແລະ ມະຫາວິທະຍາໄລຂອນແກ່ນ ຈະໄດ້ສ້າງ ສາຍພົວພັນອັນດີ ແລະ ຈະຊຸກຍູ້ໃຫ້ມີການຮ່ວມມືຊ່ວຍເຫຼືອດ້ານວິຊາການ ແລະ ອື່ນໆໃນອະນາຄົດ.

ຄະນະບັນຍາຍທັງສອງທ່ານຂອງທະນາຄານແຫ່ງ ສປປ ລາວ ໄດ້ຍົກໃຫ້ເຫັນຂະບວນວິວັດແຫ່ງການກຳເນີດ ແລະ ການເຄື່ອນໄຫວບົນເສັ້ນທາງ 43 ປີ ທີ່ເຕັມໄປດ້ວຍບົດຮຽນ ແລະ ຜົນງານອັນໃຫຍ່ຫຼວງໃນການປະກອບສ່ວນເຂົ້າໃນເສດຖະກິດແຫ່ງຊາດ ແລະ ພ້ອມດຽວກັນນັ້ນກໍໄດ້ຍົກໃຫ້ເຫັນເຖິງການພັດທະນາເສດຖະກິດແຫ່ງຊາດ ເຊິ່ງມີບາດກ້າວຂະຫຍາຍຕົວຍິ່ງໆຂຶ້ນ ເຮັດໃຫ້ ສປປ ລາວ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນນັບມື້ນັບດີຂຶ້ນ ທັງໝົດແມ່ນຍ້ອນໄດ້ຮັບການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ, ຈາກນັ້ນກໍໄດ້ມີຄວາມເຫັນ ແລະ ການຊັກຖາມຈາກຄະນະອາຈານ ແລະ ນັກສຶກສາຢ່າງຕົງໄປຕົງມາ ແລະ ມີລັກສະນະສ້າງສັນ.

ໃນການເຜີຍແຜ່ຄັ້ງນີ້ໄດ້ເຮັດໃຫ້ບັນດາຄະນະນຳ ແລະ ນັກສຶກສາມະຫາວິທະຍາໄລຂອນແກ່ນ ເຫັນໄດ້ການເຄື່ອນໄຫວ ແລະ ບົດຮຽນອັນຕັ້ງໜ້າຂອງ ສປປ ລາວ ແລະ ທະນາຄານແຫ່ງ ສປປ ລາວ ເຊິ່ງຈະກາຍເປັນບົດຮຽນອັນລ້ຳຄ່າ ແລະ ໃຫຍ່ຫຼວງໃຫ້ແກ່ນັກສຶກສາທີ່ເພີ່ມພູນຄູນສ້າງຄວາມຮູ້-ຄວາມເຂົ້າໃຈເພື່ອເປັນບົດຮຽນໃນອະນາຄົດ.